**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
***************

ທະນາຄານແຫ່ງ ສປປ ລາວ
ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (LAFF)

ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2025

## ໜັງສືສະເໜີຂໍຈົດໝາຍສະແດງເຈດຈຳນົງ (EoI)

# ກ. ເນື້ອໃນ

### 1. ຄວາມເປັນມາ

ໃນເດືອນມີນາ ປີ 2014, ລັດຖະບານ ສປປ ລາວ ແລະ ທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ (KfW) ໄດ້ຕົກລົງກັນ ສ້າງຕັ້ງກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ ຫຼື ກອງທຶນ LAFF ເພື່ອສົ່ງເສີມການປ່ອຍກູ້ໃຫ້ແກ່ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs). ປັດຈຸບັນ, ກອງທຶນດັ່ງກ່າວແມ່ນມີເງິນທຶນຈຳນວນໜຶ່ງ ເພື່ອປ່ອຍກູ້ໃຫ້ແກ່ສະຖາບັນການເງິນທີ່ມີຄວາມສົນໃຈ ແລະ ຈະຖືກຄັດເລືອກເຂົ້າມາເປັນຄູ່ຮ່ວມງານຂອງກອງທຶນ.

### 2. ຈຸດປະສົງ ແລະ ວິທີການ ຂອງກອງທຶນ

ກອງທຶນ LAFF ໃຫ້ການສະໜັບສະໜູນການພັດທະນາ ຕະຫຼາດສິນເຊື່ອ ເພື່ອປ່ອຍກູ້ໃຫ້ແກ່ ຈຸນລະວິສາຫະກິດ, ລະວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs-credit markets) ເຊິ່ງເປັນພາກສ່ວນທີ່ມີຄວາມຕ້ອງການເງິນກູ້ຢ່າງຫຼວງຫຼາຍ ແຕ່ຍັງບໍ່ທັນ ໄດ້ຮັບການຕອບສະໜອງຢ່າງພຽງພໍເທື່ອ ແລະ ຍັງເປັນພາກສ່ວນທີ່ມີການສ້າງລາຍຮັບ ແລະ ສ້າງວຽກເຮັດງານທຳໃຫ້ແກ່ ປະຊາຊົນລາວຢ່າງຫຼວງຫຼາຍ. ກອງທຶນ LAFF ສະໜອງທຶນເງິນກູ້ແບບມອບເໝົາ (Wholesale loan) ເຊິ່ງມີກຳນົດສູງສຸດ 06 ປີ ແລະ ຕາມເງື່ອນໄຂກົນໄກຕະຫຼາດ ແລະ ມີການກຳນົດອັດຕາດອກເບ້ຍໂດຍອີງໃສ່ອັດຕາດອກເບ້ຍຕົວຈິງໃນຕະຫຼາດການປ່ອຍເງິນກູ້ ຫຼື ໜີ້ສິນ ທີ່ເປັນສະກຸນເງິນກີບຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຣ). ການດຳເນີນງານຕາມກົນໄກຕະຫຼາດ ແມ່ນຈະເປັນການຊ່ວຍເຮັດໃຫ້ຜູ້ກູ້ຢືມທຶນຈາກກອງທຶນ LAFF ນັ້ນກໍ່ຄື ສະຖາບັນການເງິນທີ່ເປັນຄູ່ຮ່ວມງານ (PFIs) ສາມາດນຳໃຊ້ແຜນຍຸດທະສາດດ້ານການຕະຫຼາດ, ນະໂຍບາຍສິນເຊື່ອ ແລະ ເງື່ອນໄຂການປ່ອຍກູ້ຕໍ່ໃຫ້ແກ່ MSMEs ໄດ້ຢ່າງເຕັມສ່ວນ, ລວມທັງການກຳນົດອັດຕາດອກເບ້ຍ. ທຶນເງິນກູ້ແບບມອບເໝົາຈາກກອງທຶນ LAFF ແມ່ນສະໜອງໃຫ້ຕາມເງື່ອນໄຂເພື່ອປ່ອຍກູ້ຕໍ່ໃຫ້ແກ່ກິດຈະກຳທີ່ເປັນເສດຖະກິດ ທີ່ດຳເນີນງານໂດຍຫົວໜ່ວຍຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs), ດ້ວຍວົງເງິນກູ້ຍ່ອຍສູງສຸດ 500 ລ້ານກີບ (ຈະປັບຂຶ້ນຕື່ມໃນວົງເງິນກູ້ ຍ່ອຍສູງສຸດ 800 ລ້ານກີບ ສໍາລັບແຫຼ່ງທຶນຈາກ ທະນາຄານເພື່ອການພັດທະນາອາຊີ - ADB) ແລະ ມີກຳນົດເວລາຢ່າງໜ້ອຍ 18 ເດືອນ ໃນພື້ນທີ່ນອກຈາກສາມເມືອງຕ້ອງຫ້າມທີ່ນອນຢູ່ໃນນະຄອນຫຼວງວຽງຈັນ:(ເມືອງຈັນທະບູລີ, ເມືອງໄຊເສດຖາ ແລະ ເມືອງສີສັດຕະນາກ).

### 3. ການຄຸ້ມຄອງບໍລິຫານກອງທຶນ

ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ແຕ່ງຕັ້ງໜ່ວຍງານຄຸ້ມຄອງແລະບໍລິຫານກອງທຶນ LAFF (LMU) ເຊິ່ງແມ່ນກົມບໍລິການທະນາຄານ (BOD) ເປັນຈຸດໃຈກາງໃນການປະສານງານ.[1] ໜ່ວຍງານ LMU ແມ່ນມີຄວາມຮັບຜິດຊອບໃນການຄຸ້ມຄອງແລະບໍລິຫານ ການດຳເນີນງານຂອງກອງທຶນ LAFF ຕາມເງື່ອນໄຂ ແລະ ວິທີການທີ່ໄດ້ຕົກລົງກັນລະຫວ່າງ ທຫລ ໃນນາມເປັນອົງກອນຜູ້ບໍລິຫານໂຄງການ ແລະ ອົງການ KfW ໃນນາມຜູ້ໃຫ້ທຶນ. ທ່ານຜູ້ອຳນວຍການກອງ

---
[1] No. 108/BoL, 11/02/2020.

ທຶນ LAFF ເປັນຫົວໜ້າໜ່ວຍງານດັ່ງກ່າວ ແລະ ຢູ່ພາຍໃຕ້ການຊີ້ນຳ ຂອງຄະນະຊີ້ນຳລວມກອງທຶນ LAFF (LSC) ເຊິ່ງແມ່ນທ່ານຮອງຜູ້ວ່າການ ທຫລ ເປັນປະທານ. ໂດຍອີງຕາມທິດຊີ້ນຳຂອງຄະນະຊີ້ນຳລວມກອງທຶນ, ທ່ານຜູ້ອຳນວຍການກອງທຶນ LAFF ເຊິ່ງແມ່ນທ່ານຫົວໜ້າກົມບໍລິການທະນາຄານ, ສະນັ້ນ ຈຶ່ງປະກາດແຈ້ງການ ເພື່ອສະເໜີຂໍຈົດໝາຍສະແດງເຈດຈຳນົງຈາກສະຖາບັນການເງິນທີ່ມີຄວາມສົນໃຈເຂົ້າຮ່ວມໂຄງການ ດັ່ງລຸ່ມນີ້:

## 4. ການອອກປະກາດແຈ້ງການ

ກົມບໍລິການທະນາຄານ ຂໍຖືເປັນກຽດຮຽນສະເໜີມາຍັງ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ທີ່ມີການຄຸ້ມຄອງບໍລິຫານ ຢ່າງເປັນມືອາຊີບ ໃນ ສປປ ລາວ ແລະ ມີຍຸດທະສາດໃນການປ່ອຍກູ້ໃຫ້ແກ່ຂະແໜງການ MSMEs ລວມທັງວິສາຫະກິດທີ່ຍັງບໍ່ທັນໄດ້ຈົດທະບຽນ ແລະ ຄົວເຮືອນທີ່ປະຕິບັດກິດຈະກຳທີ່ເປັນເສດຖະກິດ, ໃຫ້ສະເໜີຂໍທຶນເງິນກູ້ແບບມອບເໝົາຈາກກອງທຶນ LAFF ແລະ ການຊ່ວຍເຫຼືອດ້ານວິຊາການ (ຖ້າທ່ານມີຄວາມຈຳເປັນ). ໃນອັດຕາດອກເບ້ຍ **7% ຕໍ່ປີ ສຳລັບທະນາຄານທຸລະກິດ ແລະ 8% ຕໍ່ປີ ສຳລັບ ສກຈຮ.** ໜັງສືສະແດງເຈດຈຳນົງ ລວມທັງໃບສະເໜີຂໍເງິນກູ້ ແລະ ເອກະສານຕ່າງໆທີ່ຕ້ອງການ ຈາກສະຖາບັນການເງິນທີ່ສະເໜີຂໍທຶນ ແມ່ນຈະໄດ້ຮັບການປະເມີນຢ່າງລະອຽດ, ອີງໃສ່ເອກະສານທີ່ສົ່ງມາໃຫ້ ແລະ ການລົງສຳພາດຕົວຈິງ ແລະ ໂດຍການນຳໃຊ້ເງື່ອນໄຂເຂົ້າຮ່ວມໂຄງການ ແລະ ເຄື່ອງມືການໃຫ້ຄະແນນທີ່ມີການສັ່ງນໍ້າໜັກ ລວມກັບການປະເມີນທາງດ້ານຄຸນນະພາບ. ສະຖາບັນການເງິນທີ່ສະເໜີຂໍທຶນ ທີ່ສາມາດຜ່ານໄດ້ບັນດາເງື່ອນໄຂຕໍ່າສຸດ ແລະ ໄດ້ຮັບຄະແນນສູງສຸດໃນແງ່ຂອງຜົນສຳເລັດດ້ານເປົ້າໝາຍການພັດທະນາຕະຫຼາດ ແລະ ຜົນຈາກການໃຫ້ຄະແນນທີ່ດີ ແມ່ນຈະໄດ້ຮັບການຄັດເລືອກເຂົ້າຮ່ວມໂຄງການ. ກ່ຽວກັບເງື່ອນໄຂເຂົ້າຮ່ວມໂຄງການ ແລະ ເອກະສານທີ່ຕ້ອງການ ແມ່ນສາມາດເບິ່ງລາຍລະອຽດໄດ້ໃນພາກ **ຂ** ຂ້າງລຸ່ມນີ້.

## 5. ເປົ້າໝາຍການພັດທະນາຕະຫຼາດ (Market-development targets)

ໃນການສະເໜີຂໍຈົດໝາຍສະແດງເຈດຈຳນົງຂອງກອງທຶນ LAFF ໃນຄັ້ງນີ້ ແມ່ນເພື່ອສົ່ງເສີມໃຫ້ບັນດາທະນາຄານທຸລະກິດ ແລະ ສກຈຮ ເຂົ້າເຖິງຫົວໜ່ວຍ MSMEs, ໂດຍສະເພາະແມ່ນຫົວໜ່ວຍ MSMEs ທີ່ເຄື່ອນໄຫວໃນເຂດຊົນນະບົດເພື່ອໃຫ້ມີໂອກາດເຂົ້າເຖິງການບໍລິການສິນເຊື່ອເພື່ອນຳໄປພັດທະນາທຸລະກິດຂອງເຂົາເຈົ້າ ຫຼື ເຮັດກິດຈະກຳທີ່ສ້າງລາຍຮັບ. ເປົ້າໝາຍ MSMEs ແມ່ນລວມທັງຫົວໜ່ວຍ MSMEs ຜູ້ທີ່ໄດ້ຈົດທະບຽນແລ້ວ ແລະ ຜູ້ທີ່ຍັງບໍ່ທັນໄດ້ຈົດທະບຽນ ແຕ່ມີຈຸດ ປະສົງທີ່ຈະຈົດທະບຽນຢ່າງເປັນທາງການ. ກອງທຶນ LAFF ມີຄວາມມຸ່ງໝັ້ນ ທີ່ຈະໃຫ້ການສະໜັບສະໜູນການພັດທະນາ ການໃຫ້ບໍລິການສິນເຊື່ອຢ່າງມີຄວາມຍືນຍົງ ຂອງສະຖາບັນການເງິນ ໃຫ້ກັບຫົວໜ່ວຍ MSMEs ແລະ ສ້າງໂອກາດໃຫ້ຜູ້ທີ່ມີຄວາມຕ້ອງການກູ້ຢືມ ສາມາດເຂົ້າເຖິງການບໍລິການສິນເຊື່ອໄດ້, ພ້ອມກັນນີ້ ກອງທຶນ LAFF ມີຄວາມຕັ້ງໃຈ ສົ່ງເສີມການລົງທຶນຍົກລະດັບເຄື່ອງມື ການຜະລິດຂອງ ຫົວໜ່ວຍ MSMEs ເພື່ອເປັນປັດໃຈສຳຄັນໃນການເພີ່ມທ່າແຮງ ໃນການແຂ່ງຂັນ ໃຫ້ແກ່ຂະແໜງການ MSMEs ຂອງ ສປປ ລາວ ເພື່ອໃຫ້ນຳທັນກັບຂະແໜງການ MSMEs ປະເທດຕ່າງໆໃນບັນດາປະຊາຄົມເສດຖະກິດອາຊຽນ (ASEAN Economic Community) ດ້ວຍການສົ່ງເສີມໃຫ້ມີການປ່ອຍກູ້ໄລຍະຍາວເພື່ອນຳໄປລົງທຶນຍົກລະດັບເຄື່ອງຈັກ ແລະ ເຄື່ອງມືອຸປະກອນໃນການຜະລິດຂອງ ບັນດາຫົວໜ່ວຍ MSMEs.

ພ້ອມກັນນີ້ ກອງທຶນ LAFF ເອົາໃຈໃສ່ໃນເລື່ອງການກຳນົດຄ່າອັດຕາດອກເບ້ຍຢ່າງຍຸດຕິທຳ ແລະ ການປົກປ້ອງລູກຄ້າ. ສະນັ້ນ, ສຳລັບສະຖາບັນການເງິນທີ່ບັນລຸໄດ້ຕາມເງື່ອນໄຂພື້ນຖານແລ້ວເບື້ອງຕົ້ນແລ້ວ, ກອງທຶນ LAFF ຈະໃຫ້ບູລິມະສິດໃຫ້ກັບສະຖາບັນການເງິນ ທີ່ກຳນົດອັດຕາດອກເບ້ຍທີ່ເໝາະສົມ ໃນການປ່ອຍກູ້ໃຫ້ລູກຄ້າ ທີ່ຈະນຳໃຊ້ບ້ວງທຶນກູ້ຢືມຈາກກອງທຶນ LAFF.

## 6. ເງື່ອນໄຂເງິນກູ້ຂອງກອງທຶນ LAFF

ທຶນຂອງກອງທຶນ LAFF ແມ່ນເປັນທຶນເງິນກູ້ທີ່ບໍ່ມີຫຼັກຊັບຄໍ້າປະກັນ ແຕ່ມີເງື່ອນໄຂຄືດັ່ງທີ່ໄດ້ລະບຸໄວ້ໃນພາກນີ້, ລາຍລະອຽດກ່ຽວກັບເງື່ອນໄຂດັ່ງກ່າວທີ່ຈະໄດ້ຕົກລົງນຳກັນແມ່ນຈະໄດ້ມີການເຈລະຈານຳກັນກັບສະຖາບັນການເງິນທີ່ໄດ້ຖືກຄັດເລືອກ ພາຍຫຼັງທີ່ໄດ້ມີການປະເມີນສິນເຊື່ອ ແລະ ມີການກວດກາບັນດາເອກະສານຕ່າງໆສຳເລັດແລ້ວ. ທຶນເງິນກູ້ຈາກກອງທຶນ LAFF ແມ່ນສະໜອງໃຫ້ເປັນທຶນໝູນວຽນ, ສະຖາບັນການເງິນທີ່ໄດ້ຮັບທຶນ ແມ່ນສາມາດປ່ອຍກູ້ຕໍ່ ແລະ ປ່ອຍໝູນວຽນໃຫ້ແກ່ໃຫ້ແກ່ຫົວໜ່ວຍ MSMEs ໄດ້ຕາມເງື່ອນໄຂສຳລັບຫົວໜ່ວຍ MSMEs ກໍ່ຄືເງື່ອນໄຂຂອງເງິນກູ້ຍ່ອຍ.

**ສັງລວມບັນດາເງື່ອນໄຂຕົ້ນຕໍຂອງທຶນເງິນກູ້ຈາກກອງທຶນ LAFF:**

- ປ່ອຍກູ້ໃຫ້ເປັນສະກຸນເງິນກີບ.
- ກໍານົດເວລາ 06 ປີສໍາລັບທະນາຄານທຸລະກິດ (ລະຫວ່າງ 4-6 ປີ ສໍາລັບ ສກຈຣ).
- ຊ່ວງພັກຊໍາລະຕົ້ນທຶນ ແມ່ນ 1/3 ຂອງກໍານົດໄລຍະເວລາເງິນກູ້ .
- ການຊໍາລະຕົ້ນທຶນແມ່ນ ຊໍາລະເປັນສີ່ງວດໃນວົງເງິນທີ່ເທົ່າກັນ, ຈ່າຍໃນຕອນທ້າຍຂອງປີທີສາມຫາປີທີຫົກ.[2]
- ອັດຕາດອກເບ້ຍ 7% ຕໍ່ປີສໍາລັບທະນາຄານທຸລະກິດ (8% ຕໍ່ປີສໍາລັບ ສກຈຣ).
- ການຈ່າຍດອກເບ້ຍແມ່ນຈ່າຍເປັນປີ ແລະ ຈ່າຍໃນຕອນທ້າຍປີຂອງແຕ່ລະປີ.
- ການຄິດໄລ່ດອກເບ້ຍແມ່ນຄິດໄລ່ຕາມຈໍານວນເງິນຕົ້ນທຶນທີ່ຍັງບໍ່ທັນໄດ້ຖືກຊໍາລະ.
- ບໍ່ມີຄ່າທໍານຽມໃດໆ, ແຕ່ຈະມີການປັບໄໝໃນກໍລະນີມີການຊໍາລະຕົ້ນທຶນຊັກຊ້າ (ກໍານົດເວລາຊັກຊ້າແມ່ນເກີນ 5 ວັນລັດຖະການ)ໂດຍການເພີ່ມດອກເບ້ຍຂຶ້ນ 2% ຂອງເວລາທີ່ຊັກຊ້າ.
- ບໍ່ມີການປັບໄໝໃນກໍລະນີຈ່າຍກ່ອນກໍານົດ.
- ບໍ່ມີຫຼັກຊັບຄໍ້າປະກັນ.
- ຕົ້ນທຶນເງິນກູ້ຈາກກອງທຶນ LAFF ທີ່ໄດ້ຖືກສົ່ງຄືນຈາກລູກຄ້າຍ່ອຍ ແມ່ນສາມາດປ່ອຍເປັນເງິນກູ້ຍ່ອຍໃຫ້ລູກຄ້າທີ່ເປັນຫົວໜ່ວຍ MSMEs ຕໍ່ໄປເລື້ອຍໆ ພາຍໃຕ້ເງື່ອນໄຂເງິນກູ້ຍ່ອຍ ຫຼື ເງື່ອນໄຂຂອງ MSMEs.

**7. ເງື່ອນໄຂສໍາລັບເງິນກູ້ຍ່ອຍ ທີ່ປ່ອຍໃຫ້ຫົວໜ່ວຍ MSMEs**

ຫົວໜ່ວຍ MSMEs ທີ່ເປັນເປົ້າໝາຍຜູ້ກູ້ຢືມຍ່ອຍ ພາຍໃຕ້ທຶນຈາກກອງທຶນ LAFF ແມ່ນລວມທັງຫົວໜ່ວຍວິສາຫະກິດ ທີ່ຍັງບໍ່ທັນໄດ້ຈົດທະບຽນ ແລະ ຄົວເຮືອນທີ່ປະຕິບັດກິດຈະກໍາທີ່ເປັນເສດຖະກິດ. ທຶນເງິນກູ້ຈາກກອງທຶນ LAFF ແມ່ນຈະຕ້ອງຖືກນໍາໃຊ້ເພື່ອປ່ອຍກູ້ໃຫ້ແກ່ກິດຈະກໍາທີ່ເປັນເສດຖະກິດ ຈັດຕັ້ງປະຕິບັດໂດຍຫົວໜ່ວຍ MSME ເພື່ອລົງທຶນສ່ວນຫຼາຍໃສ່ "**ຊັບສິນຄົງທີ່**" ຫຼື **ການຂະຫຍາຍທຸລະກິດ**[3] [4]. ຕາມຫຼັກການແລ້ວ, ທຶນເງິນກູ້ຈາກກອງທຶນ LAFF ແມ່ນສາມາດນໍາໃຊ້ເຂົ້າໃນການລົງທຶນໃສ່ທຸກໆຂະແໜງການ. ແຕ່ເຖິງຢ່າງໃດກໍ່ຕາມ, **ສະຖາບັນການເງິນທີ່ຈະເປັນຄູ່ຮ່ວມງານ (PFIs) ແມ່ນຈະຕ້ອງໄດ້ປ່ອຍກູ້ຍ່ອຍໃຫ້ແກ່ຂະແໜງການກະສິກໍາຢ່າງໜ້ອຍ 30% ຂອງຈໍານວນເງິນກູ້ຍ່ອຍທັງໝົດ[5], ພ້ອມທັງປ່ອຍກູ້ຍ່ອຍໃຫ້ແກ່ຜູ້ປະກອບການທີ່ເປັນເພດຍິງ ຢ່າງໜ້ອຍ 60% ຂອງຈໍານວນເງິນກູ້ຍ່ອຍທັງໝົດ ແລະ ບໍ່ອະນຸຍາດໃຫ້ປ່ອຍກູ້ແກ່ບັນດາກິດຈະກໍາທີ່ລະບຸໄວ້ໃນບັນຊີລາຍການກິດຈະກໍາຍົກເວັ້ນຂອງໂຄງການກອງທຶນ LAFF**, ເຊິ່ງໃຫ້ຍົກເວັ້ນບັນດາກິດຈະກໍາທີ່ເປັນອັນຕະລາຍສູງເທົ່ານັ້ນ.[6] ໃນແງ່ຂອງພື້ນທີ່ການດໍາເນີນງານ, ເງິນກູ້ຍ່ອຍທີ່ປ່ອຍກູ້ໂດຍທຶນຂອງກອງທຶນ LAFF ແມ່ນສາມາດປ່ອຍໃຫ້ໄດ້ທົ່ວປະເທດ ຍົກເວັ້ນສະເພາະແຕ່ເຂດພື້ນທີ່ ທີ່ຂຶ້ນກັບສາມເມືອງຂອງນະຄອນຫຼວງວຽງຈັນດັ່ງກ່າວຂ້າງເທິງ[7]. ສຸດທ້າຍ ແຕ່ເປັນສິ່ງທີ່ສໍາຄັນຫຼາຍນັ້ນກໍ່ຄືວ່າ ເງິນກູ້ຍ່ອຍແມ່ນຈະຕ້ອງໄດ້ປະຕິບັດຕາມຫຼັກການຂອງການປົກປ້ອງລູກຄ້າ (Client Protection Principles)[8] ແລະ ດໍາລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການດ້ານການເງິນ.[9] ຂ້າງລຸ່ມນີ້ແມ່ນເປັນການສັງລວມເງື່ອນໄຂຕົ້ນຕໍສໍາລັບເງິນກູ້ຍ່ອຍ:

---

[2] ງວດຊໍາລະເທົ່າກັນສອງງວດ ໃນຕອນທ້າຍຂອງປີທີສາມ ແລະ ທີສີ່ ໃນກໍລະນກໍານົດເວລາເງິນກູ້ສີ່ປີ ສໍາລັບ ສກຈຣ ແລະ ຄ້າຍໆຄືກັນຄືວ່າ ງວດຊໍາລະເທົ່າກັນສາມງວດໃນຕອນທ້າຍຂອງປີທີສາມ ຫາປີທີຫ້າ ໃນກໍລະນີກໍານົດເວລາເງິນກູ້ຫ້າປີ ສໍາລັບ ສກຈຣ.

[3] ກິດຈະກໍາທີ່ເປັນເສດຖະກິດ ແມ່ນເປັນກິດຈະກໍາທີ່ສ້າງລາຍຮັບໃຫ້ແກ່ຄົວເຮືອນ ນອກຈາກການບໍລິໂພກພາຍໃນຄົວເຮືອນ.

[4] ຊັບສິນຄົງທີ່ ໝາຍເຖິງຊັບສິນທີ່ສືບຕໍ່ສ້າງມູນຄ່າໃຫ້ແກ່ຂະບວນການຜະລິດ ຫຼາຍກວ່າຮອບວຽກການຜະລິດໜຶ່ງ; ໃນກໍລະນີຂອງ MSMEs ຄໍາວ່າ "*ຊັບສິນຄົງທີ່*" ສ່ວນຫຼາຍຈະບໍ່ແມ່ນຊັບສິນທີ່ມີມູນຄ່າດ້ານການເງິນຕໍ່າ ແລະ ອາຍຸການດ້ານເສດຖະກິດທີ່ສັ້ນ; ຍ້ອນແນວນັ້ນ, ການລົງທຶນຂອງ MSMEs ບາງຄັ້ງກໍ່ມີຄວາມຫຍຸ້ງຍາກໃນການຈໍາແນກ ລະຫວ່າງ "*ທຶນໝູນວຽນ*" ແລະ ບໍ່ໄດ້ແຍກອອກຈາກໃບສະເໜີຂໍເງິນກູ້ ທີ່ໄດ້ຮັບການອະນຸມັດ.

[5] ການຜະລິດກະສິກໍາ ທີ່ກໍານົດໂດຍໂຄງການກອງທຶນ LAFF ລວມມີ ການປູກພືດເສດຖະກິດ, ການລ້ຽງສັດທຸກປະເພດ ລວມທັງສັດນໍ້າ, ສັດປີກ, ການປູກພືດສວນຄົວ, ການຫາປາ ແລະ ຄ້າຂາຍປາ, ແລະ ເຄື່ອງປ່າຂອງດົງຕ່າງໆ.

[6] ບັນຊີລາຍການກິດຈະຍົກເວັ້ນ ເຊິ່ງບໍ່ລວມເອົາກິດຈະກໍາທີ່ເປັນເສດຖະກິດ ແຕ່ມີຄວາມເປັນອັນຕະລາຍສູງ. ລາຍລະອຽດເບິ່ງໃນເອກະສານຊ້ອນທ້າຍ2.

[7] ສາມເມືອງ: ເມືອງຈັນທະບຸລີ (ລະຫັດເມືອງ 0101); ເມືອງໄຊເສດຖາ (ລະຫັດເມືອງ 0103); ເມືອງສີສັດຕະນາກ (ລະຫັດເມືອງ 0104).

[8] ຫຼັກການປົກປ້ອງລູກຄ້າຂອງ SMART-campaign: https://www.smartcampaign.org/about/smart-microfinance-and-the-client-protection-principles. ສະຖາບັນທີ່ສະເໜີຂໍທຶນແມ່ນລະດົມໃຫ້ລະບຸໃສ່ໃນໜັງສືສະແດງເຈດຈໍານົງ ເຖິງແມ່ນວ່າຈະຄິດວ່າຕົນເອງບໍ່ໄດ້ປະຕິບັດໄດ້ຢ່າງເຕັມສ່ວນກໍ່ຕາມກ່ຽວກັບຫຼັກການປົກປ້ອງລູກຄ້າ.

[9] GoL/225, 06/04/2020.

**<u>ສັງລວມເງື່ອນໄຂຕົ້ນຕໍສໍາລັບເງິນກູ້ຍ່ອຍ:</u>**

- ວົງເງິນກູ້: ຕໍ່າສຸດ 2 ລ້ານກີບ ແລະ ສູງສຸດ 500 ລ້ານກີບ (ຈະປັບຂຶ້ນຕື່ມໃນວົງເງິນກູ້ ຍ່ອຍສູງສຸດ 800 ລ້ານກີບ ສໍາລັບແຫຼ່ງທຶນຈາກທະນາຄານເພື່ອການພັດທະນາອາຊີ - ADB).
- ອັດຕາດອກເບ້ຍ: ເປັນອັດຕາດອກເບ້ຍຕາມກົນໄກຕະຫຼາດ ໂດຍອີງຕາມນະໂຍບາຍສິນເຊື່ອຂອງ PFI.
- ກໍານົດເວລາສະເລ່ຍ: ຢ່າງໜ້ອຍ 18 ເດືອນ ໂດຍສະເລ່ຍ, ແຕ່ມີການປັບໄດ້ສໍາລັບ ສກຈຮ.
- ຊ່ວງພັກຊໍາລະຕົ້ນທຶນ: ໜຶ່ງສ່ວນສາມຂອງກໍານົດໄລຍະເວລາເງິນກູ້.

ນອກຈາກເງື່ອນໄຂຕ່າງໆທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ, PFI ຈະຕ້ອງໄດ້ມີການອອກແບບ ວິທີການປ່ອຍກູ້ ແລະ ຜະລິດຕະພັນເງິນກູ້ ເພື່ອສົ່ງເສີມ MSMEs ລວມທັງຕາຕະລາງເວລາຂອງງວດຈ່າຍດອກເບ້ຍ ແລະ ຊໍາລະຕົ້ນທຶນ ໂດຍສອດຄ່ອງກັບນະໂຍບາຍສິນເຊື່ອຂອງ PFI ທີ່ມີໃນປະຈຸບັນ. ນອກນັ້ນ, ໃຫ້ມີການອອກແບບ ວິທີການປ່ອຍກູ້ ແລະ ຜະລິດຕະພັນເງິນກູ້ ເພື່ອເພດຍິງ ຍິ່ງເປັນການດີ.

**8. ການສະໜອງການຊ່ວຍເຫຼືອດ້ານວິຊາການ**

ກອງທຶນ LAFF ແມ່ນສາມາດສະໜອງການຊ່ວຍເຫຼືອດ້ານວິຊາການ (TA) ໄປຄຽງຄູ່ກັບການໃຫ້ທຶນເງິນກູ້ຈາກກອງທຶນ LAFF ໃນກໍລະນີທີ່ວ່າສະຖາບັນການເງິນທີ່ຖືກຄັດເລືອກຫາກມີຄວາມຕ້ອງການ ການຊ່ວຍເຫຼືອດ້ານວິຊາການເພື່ອສະໜັບສະໜູນໃຫ້ແກ່ເປົ້າໝາຍດ້ານຍຸດທະສາດ ຫຼື ເຮັດໃຫ້ສາມາດປະຕິບັດໄດ້ທຸກໆເງື່ອນໄຂຂອງໂຄງການກອງທຶນ LAFF. ສະຖາບັນການເງິນທີ່ສະເໜີຂໍທຶນ ລວມທັງທະນາຄານທຸລະກິດ ແລະ ສກຈຮ ແມ່ນສາມາດ ສະເໜີຂໍການຊ່ວຍເຫຼືອດ້ານວິຊາການ ໃນກໍລະນີ ສະຖາບັນການເງິນນັ້ນໆ ເຫັນວ່າຈະສາມາດປະຕິບັດໄດ້ທຸກໆເງື່ອນໄຂເຂົ້າຮ່ວມໂຄງການ ຖ້າຫາກວ່າໄດ້ຮັບການຊ່ວຍເຫຼືອດ້ານວິຊາການທີ່ພຽງພໍ. ລາຍລະອຽດກ່ຽວກັບການສະເໜີຂໍການຊ່ວຍເຫຼືອດ້ານວິຊາການແມ່ນມີໃນພາກຂ້າງລຸ່ມນີ້.

## ຂ. ຂະບວນການ

**1. ຄວາມເປັນມາຂອງໜັງສືສະແດງເຈດຈໍານົງ**

ໂຄງສ້າງທີ່ຈະຕ້ອງໄດ້ປະຕິບັດສໍາລັບໜັງສືສະແດງເຈດຈໍານົງ (EoI) ແມ່ນໄດ້ລະບຸໄວ້ໃນແບບຟອມສະເໜີຂໍທຶນເງິນກູ້ (EoI-application form) ທີ່ໄດ້ຕິດຄັດມານໍາແຈ້ງການສະບັບນີ້ເປັນເອກະສານຊ້ອນທ້າຍ 1. ໜັງສືສະແດງເຈດຈໍານົງແມ່ນຈະຕ້ອງໄດ້ປະກອບດ້ວຍການອະທິບາຍຫຍໍ້ທີ່ເປັນພື້ນຖານ (ຂະໜາດທີ່ແນະນໍາ: ໜຶ່ງນ້ຳເຈ້ຍ A4) ກ່ຽວກັບວົງເງິນທີ່ສະເໜີຂໍທຶນ ແລະ ແຜນການນໍາໃຊ້ທຶນດັ່ງກ່າວ, ລວມທັງແນວຄວາມຄິດດ້ານແຜນຍຸດທະສາດ ແລະ ແຜນຂອງອົງກອນ, ຈໍານວນ ແລະ ວົງເງິນກູ້ສະເລ່ຍສໍາລັບເງິນກູ້ຍ່ອຍທີ່ຈະປ່ອຍໃຫ້ແກ່ຫົວໜ່ວຍ MSMEs ທີ່ເປັນເປົ້າໝາຍ, ຂະແໜງການທີ່ເປັນເປົ້າໝາຍ ແລະ ພື້ນທີ່ເປົ້າໝາຍ, ແລະ ລັກສະນະຫຼັກໆຂອງຜະລິດຕະພັນເງິນກູ້ທີ່ວາງແຜນທີ່ປ່ອຍໃຫ້ MSMEs, ລວມທັງອັດຕາດອກເບ້ຍ ແລະ ຄ່າທໍານຽມຕ່າງໆ, ໄລຍະປ່ອຍກູ້ ແລະ ງວດຊໍາລະຄືນ. ລາຍລະອຽດກ່ຽວກັບການສະເໜີຂໍການຊ່ວຍເຫຼືອດ້ານວິຊາການແມ່ນຈະຕ້ອງໄດ້ມີການອະທິບາຍຫຍໍ້ (ຂະໜາດແນະນໍາ: ໜຶ່ງໜ້າເຈ້ຍ A4) ແລະ ຈະຕ້ອງໄດ້ມີການມີການອະທິບາຍກ່ຽວກັບຊ່ອງຫວ່າງດ້ານຄວາມຮູ້ ຫຼື ປະສົບການ ທີ່ຈະຕ້ອງການໃຫ້ຊ່ວຍເຫຼືອ ແລະ ຜົນໄດ້ຮັບທີ່ຄາດຫວັງໄວ້, ກັບຍຸດທະສາດການຕະຫຼາດເງິນກູ້ເພື່ອສົ່ງເສີມ MSMEs, ຕໍາແໜ່ງ ແລະ ຈໍານວນຂອງພະນັກງານຂອງສະຖາບັນການເງິນທີ່ສະເໜີຂໍທຶນ ທີ່ຈະໄດ້ຮັບການຊ່ວຍເຫຼືອດ້ານວິຊາການ, ປະເພດ ແລະ ກໍານົດເວລາຂອງການຊ່ວຍເຫຼືອດ້ານວິຊາການທີ່ຈະສະເໜີຂໍ. ຖ້າເປັນໄປໄດ້, ການອະທິບາຍທັງສອງຢ່າງເທິງນີ້ແມ່ນຄວນມີການເຊື່ອມໂຍງກັນກັບແຜນຍຸດທະສາດ ແລະ ແຜນການດໍາເນີນງານຂອງສະຖາບັນການເງິນນັ້ນໆ.

**2. ເອກະສານທີ່ຕ້ອງການ**

ແບບຟອມໃບສະເໜີຂໍທຶນທີ່ສົ່ງມານໍາໜັງສືສະແດງເຈດຈໍານົງ ຄວນປະກອບມີເອກະສານຈໍານວນໜຶ່ງທີ່ຕ້ອງການໃນການປະເມີນກ່ຽວກັບຄວາມເຂັ້ມແຂງທາງດ້ານການເງິນ ແລະ ດ້ານການດໍາເນີນງານ, ແນວທາງແຜນຍຸດທະສາດ, ມາດຕະຖານດ້ານສັງຄົມ ແລະ ສິ່ງແວດລ້ອມ. ຖ້າຫາກສະຖາບັນການເງິນໃດບໍ່ສາມາດສະໜອງຂໍ້ມູນ ຫຼື ສິ່ງເອກະສານດັ່ງກ່າວຄົບຖ້ວນໃຫ້ແກ່ໂຄງການ ອາດຈະເຮັດໃຫ້ໜັງສືສະແດງເຈດຈໍານົງຖືກປະຕິເສດ. ລາຍການເອກະສານທີ່ຕ້ອງການປະກອບມີດັ່ງລຸ່ມນີ້:

*ຂໍ້ມູນດ້ານທຸລະກິດ/ການຈັດຕັ້ງພະນັກງານ*

- ໂຄງຮ່າງການຈັດຕັ້ງ

*ເອກະສານດ້ານນິຕິກຳ*

- ບົດລາຍງານສະບັບລ້າສຸດ ທີ່ໄດ້ສົ່ງໃຫ້ ທຫລ
- ໃບອະນຸຍາດດຳເນີນທຸລະກິດ
- ບົດບັນທຶກການຮ່ວມທຶນຂອງບັນດາຜູ້ຖືຮຸ້ນ

*ແຜນທຸລະກິດ*

- ແຜນທຸລະກິດ ຫຼື ກິດຈະກຳທາງດ້ານທຸລະກິດທີ່ອາງແຜນໄວ້
- ການຄາດຄະເນດ້ານການເງິນ 3-5 ປີຕໍ່ໜ້າ.

*ຂໍ້ມູນດ້ານການເງິນ*

- ບົດລາຍງານປະຈຳປີ 2022, 2023 ແລະ 2024 ທີ່ໄດ້ຖືກກວດສອບແລ້ວ, ຖ້າປີ 2024 ບໍ່ທັນໄດ້ກວດສອບ, ອາດໃຊ້ບົດລາຍງານຖານະການເງິນທີ່ສົ່ງໃຫ້ ທຫລ ໃນປີ 2024 ແທນກໍ່ໄດ້.
- ຍອດເງິນກູ້ທ້າຍປີ ປີ 2024 (ຍອດເງິນກູ້ທີ່ກຳລັງເຄື່ອນໄຫວຢູ່, ຈຳນວນລູກຄ້າຜູ້ກູ້ຢືມ, PAR ສຳລັບ ສກຈຮ, NPL ສຳລັບ ທະນາຄານ) ຈັດແຍກຕາມສາຂາ ແລະ ຜະລິດຕະພັນ.
- ຍອດເງິນກູ້ທັງໝົດໃນແຕ່ລະເດືອນຂອງປີ 2024 (ຍອດເງິນກູ້ທີ່ກຳລັງເຄື່ອນໄຫວຢູ່, ຈຳນວນລູກຄ້າຜູ້ກູ້ຢືມ, PAR ສຳລັບ ສກຈຮ, NPL ສຳລັບ ທະນາຄານ)
- ລາຍຊື່ສະບັນການເງິນທີ່ໄດ້ປ່ອຍເງິນກູ້ໃຫ້ (ເຊັ່ນວ່າ: ກອງທຶນບ້ານ ຫຼື ທະນາຄານບ້ານ, ຖ້າມີ)
- ບົດລາຍງານລາຍລະອຽດກ່ຽວກັບເງິນກູ້ປັບໂຄງສ້າງ ແລະ ເງິນກູ້ປ່ອຍຄືນໃໝ່
- ລາຍລະອຽດຍອດເງິນກູ້ສຳລັບລູກຄ້າໜີ້ຊັກຊ້າ

*ແຫຼ່ງທຶນ ລວມທັງເງິນຝາກ*

- ເງິນຝາກຕາມແຕ່ລະຜະລິດຕະພັນ, ແຕ່ລະສະກຸນເງິນ, ກຳນົດເວລາ ແລະ ອັດຕາດອກເບ້ຍເງິນຝາກແຕ່ລະປະເພດ.
- ຍອດເງິນຝາກລາຍໃຫຍ່ແຕ່ລະລາຍ ແຕ່ອັນດັບທີ 1 ຮອດ ອັນດັບທີ 15.
- ຂໍ້ມູນກ່ຽວກັບສະຖາບັນ ຫຼື ອົງກອນອື່ນທີ່ໃຫ້ທຶນກູ້ຢືມ (ຊື່ອົງກອນ, ວັນທີ່ກູ້ຢືມ, ກຳນົດເວລາ, ອັດຕາດອກເບ້ຍ, ສະກຸນເງິນ, ຕາຕະລາງເວລາຂອງການຊຳລະ, ການຄໍ້າປະກັນ, ຄ່າທຳນຽມ).

*ນະໂຍບາຍຕ່າງໆ*

- ຂໍ້ມູນກ່ຽວກັບຜະລິດຕະພັນເງິນກູ້ຫຼັກ, ກຳນົດເວລາ ແລະ ເງື່ອນໄຂຕ່າງໆ;
- ນະໂຍບາຍສິນເຊື່ອ ແລະ ຂະບວນການການປ່ອຍກູ້; ລວມທັງລາຍລະອຽດກ່ຽວກັບການບໍລິຫານໜີ້ຊັກຊ້າ ແລະ ຄູ່ມືການດຳເນີນງານ

ນອກຈາກເອກະສານຂໍ້ມູນເທິງນີ້ແລ້ວ, ທາງໂຄງການອາດຈະຮຽກຮ້ອງຂໍ້ມູນເພີ່ມຕື່ມໃນເວລາທີ່ລົງປະເມີນຄວາມພ້ອມໃນການກູ້ຢືມ (due diligence), ທາງໂຄງການຈະແຈ້ງໃຫ້ຮູ້ລ່ວງໜ້າ ກ່ອນຈະລົງປະເມີນ.

### 3. ເງື່ອນໄຂເຂົ້າຮ່ວມໂຄງການ ສໍາລັບ PFIs

| ເງື່ອນໄຂ | ຕົວຊີ້ວັດ |
|---|---|
| 1. ຄວາມສົນໃຈຫຼາຍ ໃນການປ່ອຍເງິນກູ້ ເພື່ອສົ່ງເສີມ MSME ເຊິ່ງເປັນເປົ້າໝາຍ ຂອງໂຄງການ (ວົງເງິນກູ້ຍ່ອຍຕໍ່າກວ່າ 500 ລ້ານກີບ) | 1. ມີແຜນຍຸດທະສາດ ແລະ ແຜນທຸລະກິດ ຢ່າງຈະແຈ້ງ ທີ່ມີການສຸມໃສ່ ການປ່ອຍເງິນກູ້ໃຫ້ແກ່ MSME ເຊິ່ງເປັນເປົ້າໝາຍຂອງໂຄງການ (ວົງເງິນກູ້ຍ່ອຍບໍ່ກາຍ 500 ລ້ານກີບ). |
| | 2. ມີຄວາມພ້ອມໃນການຮັບເອົາການສະໜັບສະໜູນ ເພື່ອປັບປຸງວິທີວິທະຍາຂອງ ການປ່ອຍກູ້ໃຫ້ແກ່ MSME ແລະ ປັບປຸງລະບົບການບໍລິຫານສິນເຊື່ອ (ລວມ ທັງນະໂຍບາຍ, ຂະບວນການ, ບົດແນະນໍາ ແລະ ແບບຟອມຕ່າງໆ ທີ່ກ່ຽວຂ້ອງກັບການປ່ອຍກູ້), ຖ້າເຫັນວ່າຈໍາເປັນ. |
| | 3. ຮັບໄດ້ກ່ຽວກັບ ການລົງຕິດຕາມ ແລະ ການລົງກວດກາຢູ່ພາກສະໜາມ ຢ່າງເປັນ ປະຈໍາ ໃນລະດັບຂັ້ນສະຖາບັນການເງິນ ແລະ ຂັ້ນລູກຄ້າ MSME ທີ່ກ່ຽວຂ້ອງ ໂດຍ ຫຼື ໃນນາມ ອົງການ KfW. |
| | 4. ສະໜອງຂໍ້ມູນຢູ່ພາກສະໜາມກ່ຽວກັບເງິນກູ້ຍ່ອຍທີ່ປ່ອຍໃຫ້ແກ່ MSME ທີ່ລົງທຶນໂດຍທຶນຂອງກອງທຶນ LAFF ແລະ ສະຖານະດ້ານການເງິນຂອງ PFI ຢ່າງເປັນປົກກະຕິ |
| 2. ປະສົບການ ແລະ ມີລະດັບຄວາມສາມາດໃນການປ່ອຍກູ້ຕໍ່ | 1. ມີປະສົບການໃນການປ່ອຍກູ້ໃຫ້ແກ່ MSMEs ໃນ ສປປ ລາວ ຢ່າງໜ້ອຍໜຶ່ງປີ. |
| | 2. ມີຄວາມສາມາດໃນການປ່ອຍກູ້ຕໍ່ອອກໄປໃນຈໍານວນເງິນ 15 ຕື້ກີບ ສໍາລັບທະນາຄານ (5 ຕື້ກີບ ສໍາລັບ ສກຈຣ) ໃຫ້ແກ່ MSMEs ພາຍໃນໄລຍະເວລາສອງ ປີ. |
| 3. ສາມາດປະຕິບັດໄດ້ຕາມລະບຽບການ ດ້ານຄວາມໝັ້ນຄົງ | 1. ໄດ້ຮັບໃບອະນຸຍາດຈາກ ທຫລ. |
| | 2. ຮັບໄດ້ກ່ຽວກັບການລົງຕິດຕາມຢ່າງເປັນປະຈໍາຂອງ ທຫລ. |
| | 3. ສາມາດປະຕິບັດຕາມລະບຽບການດ້ານຄວາມໝັ້ນຄົງຂອງ ທຫລ. |
| | 4. ສາມາດປະຕິບັດພັນທະດ້ານການກວດສອບພາຍນອກໄດ້. |
| | 5. ສາມາດສະໜອງໄດ້ພັນທະດ້ານການລາຍງານ. |
| | 6. ມີມາດຕະຖານການບັນຊີ ແລະ ຂະບວນການຄວບຄຸມພາຍໃນ ທີ່ສາມາດເຮັດໃຫ້ມີການຕິດຕາມໄດ້ທຶນເງິນກູ້ຈາກກອງທຶນ LAFF ແລະ ການນໍາໃຊ້ທຶນດັ່ງກ່າວ. |
| 4. ມີນະໂຍບາຍສິນເຊື່ອ ແລະ ການດໍາເນີນງານດ້ານສິນເຊື່ອທີ່ເປັນມືອາຊີບ ແລະ ໂປ່ງໃສ | 1. ມີວິທີວິທະຍາ ການປ່ອຍເງິນກູ້ ທີ່ມີປະສິດທິຜົນ. |
| | 2. ມີຂະບວນການບໍລິຫານຄວາມສ່ຽງທີ່ເໝາະສົມ. |
| | 3. ບໍ່ມີການຖົ້ມຊຸມ ແລະ ມີການນໍາໃຊ້ອັດຕາດອກເບ້ຍຕາມກົນໄກຕະລາດ. |
| | 4. ອັດຕາສ່ວນໜີ້ຊັກຊ້າ ຫຼື NPL ຢູ່ໃນລະດັບບໍ່ເກີນ 5%. |
| | 5. ອັດຕາສ່ວນຄວາມພຽງພໍຂອງທຶນ ຢ່າງໜ້ອຍ 10.5% (ສໍາລັບທະນາຄານ) ຫຼື 12% (ສໍາລັບ ສກຈຣ). |
| | 6. ລະດັບຜົນການປະຕິບັດງານສູງກວ່າລະດັບສະເລ່ຍຂອງຂະແໜງການ |
| 5. ມີການປະຕິບັດງານການບໍລິການດ້ານການເງິນທີ່ມີຄວາມຮັບຜິດຊອບ | ມີນະໂຍບາຍຂອງສະຖາບັນກ່ຽວກັບການນໍາໃຊ້ຫຼັກການ ການປົກປ້ອງລູກຄ້າ ແລະ ສອດຄ່ອງກັບຂໍ້ກໍານົດ ແລະ ກົດລະບຽບ ກ່ຽວກັບການປົກປ້ອງຜູ້ຊົມໃຊ້ການບໍລິການດ້ານການເງິນ. |

## 4. ວັນທີປິດຮັບ ແລະ ວິທີການສົ່ງໜັງສືສະແດງເຈດຈຳນົງ

ວັນ ແລະ ເວລາ ປິດຮັບໜັງສືສະແດງເຈດຈຳນົງ (EoI) ແມ່ນ **ວັນທີ 07 ເມສາ 2025, 16:00 ໂມງ** ຕາມວັນເວລາຂອງ ທະນາຄານແຫ່ງ ສປປ ລາວ. ໜັງສືສະແດງເຈດຈຳນົງ ທີ່ໄດ້ຮັບຊ້າກ່ວາວັນເວລາກຳນົດໝາຍ ດັ່ງກ່າວ ແມ່ນຈະບໍ່ຖືກພິຈາລະ. ໜັງສືສະແດງເຈດຈຳນົງ ແລະ ເອກະສານທີ່ກ່ຽວຂ້ອງ ຈະຕ້ອງໄດ້ສົ່ງໃສ່ຊອງທີ່ປິດ ແລະ ຂຽນ ຫົວຂໍ້ໃສ່ວ່າ: "***ໜັງສືສະແດງເຈດຈຳນົງ ເພື່ອຂໍທຶນຈາກກອງທຶນ LAFF ປີ 2025*** ", ສົ່ງໄປຕາມທີ່ຢູ່ຂ້າງລຸ່ມນີ້:

ກົມບໍລິການທະນາຄານ ທະນາຄານ ແຫ່ງ ສປປ ລາວ
ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ (LAFF)
ຕູ້ ປນ 19, ຖະໜົນ ຢອນເນັດ ນະຄອນຫຼວງວຽງຈັນ, ສປປ ລາວ
ທ່ານ ທ່ານ ນາງ ສ້ອຍສຸວັນ ສີບໍລິບູນ ແລະ ທ່ານ ນາງ ສຸກລາຕີ ບົວຄຳສິດ
ໂທ: 021262672; 02022440559 ແລະ 02052892494

ຫຼື ທ່ານສາມາດສົ່ງ ໜັງສືສະແດງເຈດຈຳນົງ ທາງ E-mail ໄດ້ຕາມທີ່ຢູ່: laff.laos@gmail.com (ຖ້າຟາຍເອກະສານໜັກເກີນຂະໜາດ, ທ່ານສາມາດແຍກສົ່ງໜັງສືສະແດງເຈດຈຳນົງ ແລະ ເອກະສານປະກອບ)

## 5. ຖານະດ້ານກົດໝາຍ

ການສະເໜີຂໍຈົດໝາຍສະແດງເຈດຈຳນົງໃນແມ່ນບໍ່ໄດ້ສ້າງເປັນພັນທະໃຫ້ແກ່ທະນາຄານ ແຫ່ງ ສປປ ລາວ, ລັດຖະບານ ສປປ ລາວ ຫຼື ທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ (KfW), ລວມທັງດ້ານການເງິນ ແລະ ດ້ານອື່ນໆ ແລະ ຍັງບໍ່ໄດ້ຖືກພິຈາລະນາວ່າ ເປັນສັນຍາຜູກພັນທາງດ້ານກົດໝາຍ. ພາກສ່ວນຕ່າງໆທີ່ໄດ້ລະບຸໃນຂ້າງເທິງນັ້ນ ແມ່ນສະຫງວນສິດ ທີ່ຈະປະຕິເສດ ຈົດໝາຍສະແດງເຈດຈຳນົງໃດໜຶ່ງທີ່ສົ່ງມາ ໂດຍບໍ່ມີການຮ້ອງຟ້ອງຈາກຜູ້ສະເໜີຂໍທຶນ ສຳລັບການປະຕິເສດ. ແຕ່ເຖິງຢ່າງໃດກໍ່ຕາມ, ທີມງານບໍລິຫານຂອງກອງທຶນ LAFF ຈະພະຍາຍາມອະທິບາຍເຫດຜົນໃຫ້ແກ່ຜູ້ສະເໜີຂໍທຶນ ທີ່ບໍ່ໄດ້ຮັບການຄັດເລືອກຕາມຄວາມເໝາະສົມ ແລະ ເພື່ອຊ່ວຍໃຫ້ຜູ້ສະເໜີຂໍທຶນທີ່ບໍ່ໄດ້ຖືກຄັດເລືອກເອົາເປັນບົດຮຽນ ໃນການສະເໜີຂໍ ທຶນຈາກກອງທຶນ LAFF ໃນຊຸດຕໍ່ໄປ. ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ມີສ່ວນຮ່ວມໃນ (ດ້ານການ ຊ່ວຍດ້ານວິຊາການ) ແລະ ທີມງານບໍລິຫານກອງທຶນ LAFF ຈະເກັບຮັກສາແບບຟອມສະເໜີຂອງທຶນ ເປັນຄວາມລັບທີ່ສຸດ ແລະ ຈະນຳໃຊ້ຂໍ້ມູນທີ່ໄດ້ຮັບພຽງແຕ່ເຂົ້າໃນເປົ້າໝາຍ ເພື່ອການຄັດເລືອກຕາມເງື່ອນໄຂໄດ້ຮັບທຶນ ແລະ ການຊ່ວຍເຫຼືອດ້ານວິຊາການ ຈາກກອງທຶນ LAFF.

**ເອກະສານຊ້ອນທ້າຍ 1: ແບບຟອມໜັງສືສະເໜີເຈດຈຳນົງ**

| **ເອກະສານຊ້ອນທ້າຍ 1 ທີ່ຕິດຄັດມາພ້ອມກັບການສະເໜີຂໍຈົດໝາຍສະແດງເຈດຈຳນົງ 2025 ຂອງກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ (LAFF)**<br>**ໃບສະເໜີຂໍທຶນ** | | |
|---|---|---|
| ກະລຸນາຮັບປະກັນວ່າ ຂໍ້ມູນຂ່າວສານທີ່ຕ້ອງການແມ່ນໄດ້ຖືກຕື່ມໃສ່ຢ່າງຄົບຖ້ວນ ແລະ ເອກະສານທີ່ຕ້ອງການແມ່ນໄດ້ຖືກສົ່ງມາ ພ້ອມ ໃນເວລາທີ່ທ່ານສົ່ງໜັງສືສະແດງເຈດຈຳນົງ. | | |
| **ພາກທີ 1: ອົງການຈັດຕັ້ງ ແລະ ທີ່ຢູ່ຕິດຕໍ່** | | |
| **1.1 ຊື່ເຕັມ** | | |
| **1.2. ທີ່ຢູ່ຕິດຕໍ່** | | |
| **1.3 ລາຍລະອຽດກ່ຽວກັບການຂຶ້ນທະບຽນ ແລະ ໃບອະນຸຍາດ** | **ປະເພດ** | **ເລກທີ, ອອກໃຫ້ວັນທີ, ອົງກອນລັດທີ່ອອກໃຫ້** |
| | 1.3.1 ການຈົດທະບຽນດຳເນີນທຸລະກິດ | |
| | 1.3.2 ໃບອະນຸຍາດ ຈາກ ທຫລ | |
| | 1.3.3 ທະບຽນອາກອນ | |
| **ຕົວແທນຂອງບໍລິສັດທີ່ຖືກຕ້ອງຕາມກົດໝາຍ** | | |
| **1.4 ລາຍລະອຽດກ່ຽວກັບການຕິດຕໍ່ຂອງຜູ້ທີ່ເປັນຕົວແທນຂອງສະຖາບັນການເງິນ (ເຊັ່ນວ່າ: ບຸກຄົນຜູ້ທີ່ຈົດທະ ບຽນໃນນາມສະຖາ ບັນການເງິນ ແລະ ອຳນາດໃນການເປັນຜູ້ຕາງໜ້າ ຫຼື ລົງລາຍເຊັນໃນນາມສະຖາບັນການເງິນ)** | 1.4.1 ຊື່ ແລະ ນາມສະກຸນ ແລະ ຕຳແໜ່ງ | |
| | 1.4.2 ເບີໂທລະສັບຫ້ອງການ | |
| | 1.4.3 ເບີໂທລະສັບ ມືຖື | |
| | 1.4.4 ທີ່ຢູ່ອີເມວຫ້ອງການ | |
| | 1.4.5 ທີ່ຢູ່ຫ້ອງການ | |
| | 1.4.6 ຕູ້ ປນ | |
| **ການຕິດຕໍ່ບຸກຄົນຜູ້ທີ່ຮັບຜິດຊອບກ່ຽວກັບໜັງສືສະແດງເຈດຈຳນົງຂໍທຶນ** | | |

| | | |
|---|---|---|
| **1.5. ລາຍລະອຽດ ກ່ຽວກັບການຕິດຕໍ່ ຂອງຕົວແທນສະຖາບັນການເງິນ ຫຼື ພະນັກງານ ຜູ້ບໍລິຫານ ໜັງສືສະແດງ ເຈດຈໍານົງ.** | 1.5.1 ຊື່ ແລະ ນາມສະກຸນ ແລະ ຕໍາແໜ່ງ | |
| | 1.5.2 ເບີໂທລະສັບ ມືຖື | |
| | 1.5.3 ທີ່ຢູ່ອີເມວ | |

| **1.6 ບັນຊີລາຍຊື່ ແຂວງ ແລະ ເມືອງ ທີ່ອົງກອນຂອງທ່ານ ອະນຸຍາດໃຫ້ເຮັດ ວຽກ ແລະ ມີສາຂາ ຫຼື ໜ່ວຍບໍລິການ ເພື່ອປ່ອຍກູ້ໃຫ້ແກ່ MSMEs** | **1.6.1 ແຂວງ** | **1.6.2 ເມືອງ** |
|---|---|---|
| | | |
| | | |
| | | |

| **ພາກທີ 2: ການສະເໜີຂໍທຶນຈາກກອງທຶນ LAFF** | | |
|---|---|---|
| **2.1 ການ ສະເໜີຂໍທຶນ ຈາກກອງທຶນ LAFF ໃນເທື່ອນີ້** | ວົງເງິນລວມ ທີ່ສະເໜີຂໍໃນງວດນີ້ (ລ້ານກີບ). | |
| **2.2 ຄວາມສົນໃຈຂໍທຶນຈາກກອງທຶນ LAFF ສໍາລັບງວດໜ້າ** | ຄາດຄະເນຄວາມສົນໃຈຂໍທຶນຈາກກອງທຶນ LAFF ເພື່ອມາເປັນທຶນເພີ່ມເຕີມ ສໍາລັບງວດໜ້າ (ລ້ານກີບ). | |
| **2.3 ຄວາມເປັນມາ ຫຼື ເຫດຜົນ ກ່ຽວກັບການຂໍທຶນ ຈາກກອງທຶນ LAFF** | ພວກເຮົາໄດ້ອະທິບາຍກ່ຽວກັບຄວາມເປັນມາ ຫຼື ເຫດຜົນຂອງການສະເໜີຂໍທຶນຈາກກອງທຶນ LAFF ພາຍໃຕ້ການສະແດງເຈດຈໍານົງເທື່ອນີ້ ໃນໜຶ່ງໜ້າເຈ້ຍ -A4, ລວມທັງແຜນການນໍາໃຊ້ທຶນ (ເບິ່ງໃນ: ພາກ ຂ ຂໍ້ໜ້າທີ 1 ຂອງໜັງສືສະແດງເຈດຈໍານົງ). ຄວນຕອບຄໍາຖາມດ້ວຍຄໍາວ່າ ແມ່ນ ຫຼື ບໍ່ແມ່ນ; ຖ້າຫາກວ່າຄໍາຕອບວ່າ "ບໍ່" ອາດກ້າວໄປສູ່ການບໍ່ມີເງື່ອນໄດ້ຮັບທຶນ. | |

| ພາກທີ 3: ການສະເໜີຂໍການຊ່ວຍເຫຼືອດ້ານວິຊາການ | | |
|---|---|---|
| **3. ການ ສະເໜີຂໍການ ຊ່ວຍເຫຼືອດ້ານວິຊາ ການ** | 3.1. ພວກເຮົາສະເໜີຂໍການຊ່ວຍເຫຼືອ ດ້ານວິຊາການ (ຄຳຕອບ: ຂໍ/ບໍ່ຂໍ) | |
| | 3.2 ພວກເຮົາໄດ້ອະທິບາຍກ່ຽວກັບຄວາມ ເປັນມາ ຫຼື ເຫດຜົນ ການຂໍການຊ່ວຍເຫຼືອ ດ້ານວິຊາການ (ເບິ່ງໃນ: ພາກ ຂ. ຍໍ້ໜ້າທີ 1 ຂອງໜັງສືສະເໜີຂໍຈົດໝາຍສະແດງ ເຈດຈຳນົງ). ຄຳຕອບ ຂໍ/ບໍ່ຂໍ | |
| | 3.3 ພວກເຮົາສະເໜີຂໍການປະເມີນ ຄວາມຕອງການ ກ່ຽວກັບການຊ່ວຍເຫຼືອ ດ້ານວິຊາການ ເພີ່ມເຕີມ ເພື່ອສ້າງເປັນ ແຜນການຊ່ວຍເຫຼືອດ້ານວິຊາການແບບ ຄົບຊຸດ (ຄຳຕອບ: ຂໍ/ບໍ່ຂໍ). | |

| **ພາກທີ 4: ເງື່ອນໄຂໄດ້ຮັບທຶນ**<br>**ກະລຸນາຊີ້ແຈງ ວ່າແມ່ນ ຫຼື ບໍ່ແມ່ນ ຫຼື ຕື່ມເປັນຕົວເລກ ທີ່ສອດຄ່ອງກັບສະຖາບັນການເງິນຂອງທ່ານ, ຖ້າທ່ານເຫັນວ່າຈຳເປັນ ກະລຸນາອະທິບາຍເພີ່ມເຕີມ ໂດຍເພີ່ມເປັນເອກະສານຕິດຄັດມາພ້ອມ.** | | |
|---|---|---|
| **ເງື່ອນໄຂໄດ້ຮັບທຶນ** | **ຕົວຊີ້ວັດ** | **ແມ່ນ/ບໍ່ແມ່ນ ຫຼື ໃສ່ເປັນຕົວ ເລກ** |
| **A.** ຄວາມສົນໃຈຫຼາຍ ໃນການ ປ່ອຍເງິນກູ້ ເພື່ອສົ່ງເສີມ MSME ເຊິ່ງເປັນເປົ້າໝາຍ ຂອງໂຄງການ (ວົງເງິນກູ້ ຍ່ອຍຕໍ່າກວ່າ 500 ລ້ານກີບ) | 1. ມີແຜນຍຸດທະສາດ ແລະ ແຜນທຸລະກິດ ຢ່າງ ຈະແຈ້ງ ທີ່ມີການສຸມໃສ່ ການປ່ອຍເງິນກູ້ໃຫ້ແກ່ MSME ເຊິ່ງເປັນເປົ້າໝາຍຂອງໂຄງການ (ວົງເງິນ ກູ້ຍ່ອຍບໍ່ກາຍ 500 ລ້ານກີບ). | |
| | 2. ມີຄວາມພ້ອມໃນການຮັບເອົາການສະໜັບສະໜູນ ເພື່ອປັບປຸງວິທີວິທະຍາຂອງ ການ ປ່ອຍກູ້ໃຫ້ແກ່ MSME ແລະ ປັບປຸງລະບົບການບໍລິຫານສິນເຊື່ອ (ລວມທັງນະໂຍບາຍ, ຂະບວນການ, ປຶ້ມແນະນຳ ແລະ ແບບຟອມຕ່າງໆ ທີ່ກ່ຽວຂ້ອງກັບການປ່ອຍກູ້), ຖ້າເຫັນວ່າຈຳເປັນ | |
| | 3. ຮັບໄດ້ກ່ຽວກັບການລົງຕິດຕາມ ແລະ ການລົງກວດກາຢູ່ພາກສະໜາມ ຢ່າງເປັນ ປະຈຳ ໃນລະດັບຂັ້ນສະຖາບັນການເງິນ ແລະ ຂັ້ນລູກຄ້າ MSME ທີ່ກ່ຽວຂ້ອງ ໂດຍ ຫຼື ໃນນາມ ອົງການ KfW. | |
| | 4. ສະໜອງຂໍ້ມູນຢູ່ພາກສະໜາມກ່ຽວກັບເງິນກູ້ ຍ່ອຍທີ່ປ່ອຍໃຫ້ແກ່ MSME ທີ່ລົງທຶນໂດຍທຶນ ຂອງກອງທຶນ LAFF ແລະ ສະຖານະດ້ານການ ເງິນຂອງ PFI ຢ່າງເປັນປົກກະຕິ | |

| | | |
|---|---|---|
| **B.** ປະສົບການ ແລະ ມີລະດັບຄວາມສາມາດໃນການປ່ອຍກູ້ຕໍ່ | 1. ມີປະສົບການໃນການປ່ອຍກູ້ໃຫ້ MSMEs ໃນ ສປປ ລາວ ຢ່າງໜ້ອຍໜຶ່ງປີ. | |
| | 2. ມີຄວາມສາມາດໃນການປ່ອຍກູ້ອອກໄປໃນຈຳນວນ 15 ຕື້ກີບ ສຳລັບທະນາຄານ (5 ຕື້ກີບ ສຳລັບ ສກຈຮ) ໃຫ້ແກ່ MSMEs ພາຍໃນໄລຍະເວລາ ສອງປີ. | |
| **C.** ສາມາດປະຕິບັດໄດ້ຕາມລະບຽບການ ດ້ານຄວາມໝັ້ນຄົງ | 1. ໄດ້ຮັບໃບອະນຸຍາດຈາກ ທຫລ. | |
| | 2. ຮັບໄດ້ກ່ຽວກັບການລົງຕິດຕາມຢ່າງເປັນປະຈຳຂອງ ທຫລ | |
| | 3. ສາມາດປະຕິບັດຕາມລະບຽບການດ້ານຄວາມໝັ້ນຄົງຂອງ ທຫລ | |
| | 4. ສາມາດປະຕິບັດພັນທະດ້ານການກວດສອບພາຍນອກໄດ້. | |
| | 5. ສາມາດສະໜອງໄດ້ພັນທະດ້ານການລາຍງານ. | |
| | 6. ມີມາດຕະຖານການບັນຊີ ແລະ ຂະບວນການຄວບຄຸມພາຍໃນ ທີ່ສາມາດເຮັດໃຫ້ມີການຕິດຕາມໄດ້ທຶນເງິນກູ້ຈາກກອງທຶນ LAFF ແລະ ການນຳໃຊ້ທຶນດັ່ງກ່າວ. | |
| **D.** ມີນະໂຍບາຍສິນເຊື່ອ ແລະ ການດຳເນີນງານດ້ານສິນເຊື່ອທີ່ເປັນມືອາຊີບ ແລະ ໂປ່ງໃສ | 1. ມີວິທີວິທະຍາ ການປ່ອຍເງິນກູ້ ທີ່ມີປະສິດ ທິຜົນ. | |
| | 2. ມີຂະບວນການບໍລິຫານຄວາມສ່ຽງທີ່ເໝາະສົມ. | |
| | 3. ບໍ່ມີການຖົມຂຸມ ແລະ ມີການນຳໃຊ້ອັດຕາດອກເບ້ຍຕາມກົນໄກຕະລາດ. | |
| | 4. ອັດຕາສ່ວນໜີ້ຊັກຊ້າ ຫຼື NPL ຢູ່ໃນລະດັບບໍ່ເກີນ 5%. | |
| | 5. ອັດຕາສ່ວນຄວາມພຽງພໍຂອງທຶນ ຢ່າງໜ້ອຍ 10.5% (ສຳລັບທະນາຄານ) ຫຼື 12% (ສຳລັບ ສກຈຮ). | |
| | 6. ລະດັບຜົນການປະຕິບັດງານສູງກວ່າລະດັບສະເລ່ຍຂອງຂະແໜງການ. | |
| **E.** ມີການປະຕິບັດງານການບໍລິການດ້ານການເງິນທີ່ມີຄວາມຮັບຜິດຊອບ | ນະໂຍບາຍຂອງສະຖາບັນກ່ຽວກັບການນຳໃຊ້ຫຼັກການ ການປົກປ້ອງລູກຄ້າ ແລະ ສອດຄ່ອງກັບຂໍ້ກຳນົດ ແລະ ກົດລະບຽບ ກ່ຽວກັບການປົກປ້ອງຜູ້ຊົມໃຊ້ການບໍລິການດ້ານການເງິນ. | |

| ພາກທີ 5: ພາບລວມກ່ຽວກັບການສະໜັບສະໜູນດ້ານວິຊາການ ແລະ/ ຫຼື ດ້ານການເງິນ ຈາກອົງການຈັດຕັ້ງສາກົນ ແລະ/ຫຼື ອົງກອນຜູ້ໃຫ້ທຶນ, ລັດຖະບານ ຫຼື ແຫຼ່ງທຶນຈາກພາຍນອກອື່ນໆ ລວມທັງ ສະຖາບັນການເງິນສາກົນ. ກະລຸນາໃຫ້ລາຍລະອຽດກ່ຽວກັບພາບລວມຂອງການສະໜັບສະໜູນທີ່ມີໃນປະຈຸບັນ ດັ່ງກ່າວ ຖ້າມີ: | | |
|---|---|---|
| ອົງກອນ | ປະເພດຂອງການສະໜັບສະໜູນ ແລະ ຊັບພະຍາກອນມະນຸດ ແລະ ຊັບພະຍາກອນດ້ານການ ເງິນທີ່ກ່ຽວຂ້ອງ | ວັນທີເລີ່ມຕົ້ນ ແລະ ວັນທີສິ້ນສຸດ ການສະໜັບສະໜູນ |
| | | |
| | | |
| | | |

| ພາກທີ 6: ພາບລວມ ກ່ຽວກັບເອກະສານ ແລະ ຂໍ້ມູນຂ່າວສານ ທີ່ຕ້ອງສົ່ງໃຫ້ກອງທຶນ. | | |
|---|---|---|
| ຫົວຂໍ້ | ສະໜອງໃຫ້ໃນຮູບແບບ – ທີ່ເປັນບ່ອນອີງ | **yes / no** |
| ຄວາມເປັນມາ ຫຼື ເຫດຜົນ ທີ່ສະເໜີຂໍທຶນ ຈາກກອງທຶນ **LAFF** (ເບິ່ງໃນ: ພາກທີ **2** ຂອງແບບຟອມນີ້) | ຂຽນເພີ່ມເຕີມ (ໜຶ່ງໜ້າເຈ້ຍ A4) | |
| ຄວາມເປັນມາ ຫຼື ເຫດຜົນສະເໜີຂໍການຊ່ວຍເຫຼືອດ້ານວິຊາການຈາກ ກອງທຶນ **LAFF** (ເບິ່ງໃນ: ພາກທີ **3** ຂອງແບບຟອມນີ້) | ຂຽນເພີ່ມເຕີມ (ໜຶ່ງໜ້າເຈ້ຍ A4) | |
| ເງື່ອນໄຂໄດ້ຮັບທຶນ (ເບິ່ງໃນ: ພາກທີ **4** ຂອງແບບຟອມນີ້) | ການກວດກາ: ໃຫ້ໃສ່ວ່າ "ແມ່ນ", ບໍ່ໃສ່ຕົວເລກ, ຖ້າເຫັນວ່າຈຳເປັນ ກະລຸນາອະທິບາຍເພີ່ມເຕີມໃສ່ໜ້າເຈ້ຍຕ່າງຫາກ | |
| ເອກະສານທີ່ຕ້ອງການ (ເບິ່ງໃນ: ໜັງສືສະແດງເຈດຈຳນົງ) | | |

| ພາກທີ 7: ການຢັ້ງຢືນ | | |
|---|---|---|
| ຂ້າພະເຈົ້າ, ທີ່ລົງລາຍເຊັນຂ້າງລຸ່ມນີ້, ຢັ້ງຢືນວ່າ ຂໍ້ມູນຂ່າວສານ ທີ່ໄດ້ປະກອບໃຫ້ໃນແບບຟອມສະບັບນີ້ ແມ່ນຖືກຕ້ອງ ແລະ ຄົບ ຖ້ວນ. ຂ້າພະເຈົ້າຮັບຮູ້ວ່າ ການສະໜອງຂໍ້ມູນຂ່າວສານທີ່ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ແມ່ນຈະເຮັດໃຫ້ ສະຖາບັນຂອງຂ້າພະເຈົ້າ ບໍ່ສາມາດໄດ້ຮັບທຶນ ແລະ ການຊ່ວຍເຫຼືອດ້ານວິຊາການ ຈາກກອງທຶນ LAFF ທັງໃນປະຈຸບັນ ແລະ ໃນອະນາຄົດ.<br>____________________<br>*ລົງລາຍເຊັນ* | | |
| ຊື່ ແລະ ນາມສະກຸນ | | ຈ້ຳກາຂອງສະຖາບັນການເງິນ |

<table>
<tr><td>ຜູ້ລົງລາຍ ເຊັນ</td><td></td><td rowspan="3"></td></tr>
<tr><td>ຕຳແໜ່ງໃນ ສະຖາບັນ ການເງິນ</td><td></td></tr>
<tr><td>ວັນທີ</td><td></td></tr>
<tr><td colspan="3">ວັນທີ ແລະ ເວລາ ປິດສົ່ງຈົດໝາຍສະແດງເຈດຈຳນົງ (EoI) ແມ່ນ ວັນທີ 07 ເມສາ 2025, ເວລາ 16:00 ຕາມວັນເວລາຂອງທະນາຄານແຫ່ງ ສປປ ລາວ. ຈົດໝາຍສະແດງເຈດຈຳນົງ ທີ່ໄດ້ຮັບຊ້າກວ່າວັນກຳນົດ ໝາຍດັ່ງກ່າວ ແມ່ນຈະບໍ່ໄດ້ຖືກພິຈາລະນາ. ໜັງສືສະແດງເຈດຈຳນົງ ແລະ ເອກະສານທີ່ກ່ຽວຂ້ອງ ຈະຕ້ອງໄດ້ສົ່ງໃສ່ຊອງທີ່ປິດ ແລະ ຂຽນຫົວຂໍ້ໃສ່ວ່າ “ຈົດໝາຍສະແດງເຈດຈຳນົງ ເພື່ອຂໍທຶນຈາກກອງທຶນ LAFF ປີ 2025”, ສົ່ງໄປຕາມທີ່ຢູ່ ຂ້າງລຸ່ມນີ້:<br><br>ກົມບໍລິການທະນາຄານ, ທະນາຄານ ແຫ່ງ ສປປ ລາວ<br>ກອງເລຂາ ກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນ ໃນ ສປປ ລາວ (LAFF)<br>ຕູ້ ປນ 19, ຖະໜົນ ຢອນເນ<br>ນະຄອນຫຼວງວຽງຈັນ, ສປປ ລາວ<br>ສົ່ງ: ທ່ານ ນ ສ້ອຍສຸວັນ ສີບໍລິບູນ ແລະ ທ່ານ ນ ສຸກລາຕີ ບົວຄ່າສິດ<br>ໂທ: 021262672; 02022440559 ແລະ 02052892494</td></tr>
</table>

**ເອກະສານຊ້ອນທ້າຍ 2. ລາຍການຍົກເວັ້ນຂອງກອງທຶນ LAFF**

**ກຸ່ມ KfW ບໍ່ສະໜອງແຫຼ່ງທຶນໃຫ້ແກ່ການລົງທຶນເປົ້າໝາຍໂຄງການຕ່າງໆໃນຄົງເຂດລຸ່ມນີ້:**

1. ການຜະລິດ ຫຼື ການຄ້າຂາຍຜະລິດຕະພັນ ຫຼື ກິດຈະກໍາ ທີ່ຖືກລົບລ້າງ ຫຼື ເກືອດຫ້າມ ທັງພາຍໃນ ແລະ ສາກົນ ເຊັ່ນ ຕົວຢ່າງດັ່ງລຸ່ມນີ້

i) ຢາ, ຢາກໍາຈັດສັດຕູພືດ, ຢາຂ້າຫຍ້າ ແລະ ສານພິດອື່ນໆ ບາງຊະນິດ (ພາຍໃຕ້ສົນທິສັນຍາ Rotterdam, ສົນທິສັນຍາ Stockholm, ແລະ WHO "ຜະລິດຕະພັນການຢາ: ການຈໍາກັດນໍາໃຊ້ ແລະ ການຄອບຄອງ"),
ii) ສານທີ່ທໍາລາຍຊັ້ນ ໂອໂຊນ (ozone depleting) (ພາຍໃຕ້ ໂປຼໂຕໂຄ Montreal),
iii) ການປົກປ້ອງສັດປ່າ ຫຼື ຜະລິດຕະພັນຈາກສັດປ່າ (ພາຍໃຕ້ ສົນທິສັນຍາ CITES / Washington)
iv) ການຄ້າສິ່ງເສດເຫຼືອຂ້າມຊາດທີ່ເກືອດຫ້າມ (ພາຍໃຕ້ ສົນທິສັນຍາ Basel).

2. ການລົງທຶນທີ່ອາດຈະກ່ຽວຂ້ອງກັບການທໍາລາຍ** ຫຼື ສ້າງຜົນເສຍຫາຕໍ່ຄົງເຂດທີ່ມີຄຸນຄ່າຕໍ່ການອະນຸລັກ (ໂດຍບໍ່ໄດ້ມີການຊົດເຊີຍທີ່ພຽງພໍຕາມມາດຕະຖານສາກົນ).

3. ການຜະລິດ ຫຼື ຄ້າຂາຍອາວຸດທີ່ຍັງມີຂໍ້ຂັດແຍ້ງ ຫຼື ອົງປະກອບສໍາຄັນທີ່ຈະນໍາໄປສ້າງອາວຸດທີ່ມີອະນຸພາບ ທໍາລາຍລ້າງຮ້າຍແຮງ (ອາວຸດນິວເຄຼຍ ແລະ ຫົວລູກປືນກໍາມັງຕະພາບລັງສີ, ອາວຸດຊີວະພາບ ແລະ ອາວຸດເຄມີທີ່ມີອະນຸພາບທໍາລາຍ ຮ້າຍແຮງ, ລູກບົມບີ້, ລູກມິນ, ການກັ່ນຕອງທາດຢູຣານຽມ)

4. ການຜະລິດ ແລະ ຄ້າຂາຍວັດຖຸທີ່ແຜ່ກໍາມັງຕະພາບລັງສີ. ແຕ່ໃນນີ້ບໍ່ລວມການຈັດຊື້ອຸປະກອນການແພດ, ອຸປະກອນ ຄວບຄຸມຄຸນນະພາບ, ຫຼື ເຄື່ອງມືອຸປະກອນອື່ນໆ ຊຶ່ງໄດ້ມີປ້ອງກັນຄວບຄຸມການແຜ່ກໍາມັງຕະພາບລັງສີ ຢ່າງພຽງພໍແລ້ວ.

5. ການຜະລິດ ແລະ ຄ້າຂາຍແຮ່ໄຍຫີນທີ່ບໍ່ມີການຈັບຕົວ (unbound asbestos). ໃນນີ້ບໍ່ລວມການຈັດຊື້ ຫຼື ນໍາໃຊ້ໄຍສີມັງ ທີ່ມີການຈັບຕົວ ແລະ ສິ້ນສ່ວນທີ່ມີສ່ວນປະກອບໄຍທີ່ບໍ່ເກີນ 20%.

6. ວິທີການຫາປາທີ່ມີການທໍາລາຍລ້າງສູງ ຫຼື ການຫາປາແບບໄຫຼມອງໃນທະເລ ທີ່ນໍາໃຊ້ມອງທີ່ມີລວງຍາວ ເກີນກ່ວາ 2.5 ກິໂລແມັດ.

7. ການສ້າງເຕົາປະຕິກອນນິວເຄຼຍ (ຍົກເວັ້ນໄດ້ມີມາດຕະການໃນການລຸດຜ່ອນຄວາມອັນຕະລາຍຕໍ່ຊັບສິນທີ່ມີຢູ່) ແລະ ການຂຸດຄົ້ນແຮ່ທາດທີ່ມີທາດຢູຣານຽມ.

8. ການຂຸດຄົ້ນ (prospection), ການສໍາຫຼວດ ແລະ ຂຸດຄົ້ນຖ່ານຫີນ; ການຂົນສົ່ງທາງບົກທີ່ ແລະ ພື້ນຖານ ໂຄງລ່າງທີ່ນໍາໃຊ້ຖ່ານຫີນ; ໂຮງງານໄຟ, ສະຖານີສ້າງຄວາມຮ້ອນ ແລະ ອຸປະກອນສ້າງຄວາມຮ້ອນທີ່ນໍາໃຊ້ ຖ່ານຫີນ.

9. ການຂຸດຄົ້ນ, ການສໍາຫຼວດ ແລະ ການກັ່ນນໍ້າມັນຈາກ ຫີນດິນດານ (bituminous shale), ນໍ້າມັນຫີນຊາຍ (tar or oil sands) ທີ່ບໍ່ໄດ້ນໍາໃຊ້ວິທີດັ່ງເດີມ.